ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

--------------------

ກະຊວງສາທາລະນະສຸກ                                                  ເລກທີ 102 /ກຊສ

ນະຄອນຫຼວງວຽງຈັນ ວັນທີ 21 ມັງກອນ 2004

**ຂໍ້ກຳນົດ**

**ວ່າດ້ວຍມາດຕະຖານເກືອໄອໂອດີນ**

- ອີງໃສ່: ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການປະສົມສານໄອໂອດີນໃສ່ເກືອ ເລກທີ 42/ນຍ, ລົງວັນທີ 20 ມິຖຸນາ 1995.
- ອີງໃສ່: ດຳລັດຂອງນາຍົກລັດຖະມົນຕີວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງສາທາລະນະສຸກ ສະບັບເລກທີ 020/ນຍ, ລົງວັນທີ 09 ມີນາ 1999.
- ອີງໃສ່: ສະພາບການຕົວຈິງ, ການສຳຫລວດພະຍາດຂາດສານໄອໂອດີນ ໃນຊຸມປີຜ່ານມາ ແລະ ການຄົ້ນຄວ້າ, ຄວາມເປັນເອກກະພາບທາງດ້ານວິຊາການລະຫວ່າງກົມອາຫານ ແລະ ຢາ, ກົມອະນາໄມ-ກັນພະຍາດ ແລະ ສູນວິໄຈອາຫານ ແລະ ຢາ.

**ລັດຖະມົນຕີວ່າການກະຊວງສາທາລະນະສຸກອອກຂໍ້ກຳນົດ**

**ວ່າດ້ວຍມາດຕະຖານເກືອໄອໂອດີນດັ່ງຕໍ່ໄປນີ້:**

## ໝວດທີ 1

## ຫຼັກການລວມ

**ມາດຕາ 1. ຈຸດປະສົງ ແລະ ລະດັບຄາດໝາຍ**

1. **ຈຸດປະສົງ**

   ເພື່ອຄວບຄຸມຄຸນນະພາບເກືອໄອໂອດີນທີ່ຜະລິດ, ນຳເຂົ້າ ແລະ ຈໍລະຈອນຢູ່ໃນ ສປປ ລາວ ໃຫ້ບັນລຸມາດຕະຖານທີ່ກະຊວງສາທາລະນະສຸກໄດ້ກຳນົດ, ແນໃສ່ເພື່ອສົ່ງເສີມ ແລະ ປົກປ້ອງສຸຂະພາບຂອງຜູ້ບໍລິໂພກ.

2. **ລະດັບຄາດໝາຍ**

   ຜູ້ບໍລິໂພກໄດ້ຮັບເກືອໄອໂອດີນ ທີ່ມີຄຸນນະພາບມາດຕະຖານ, ແນໃສ່ເພື່ອລົບລ້າງ ບັນດາພະຍາດຂາດສານໄອໂອດີນ.

**ມາດຕາ 2. ຄວາມໝາຍຂອງຄຳສັບ**

ເກືອໄອໂອດີນ (ຫລື ເກືອອີອົດ) ແມ່ນຜະລິດຕະພັນເກືອທີ່ປຸງແຕ່ງຈາກເກືອທຳມະດາ (ໃນນັ້ນລວມທັງເກືອຕົ້ມ ແລະ ເກືອຕາກ) ປະສົມກັບສານໂປຕາຊຽມໄອໂອເດດ.

## ໝວດທີ 2

## ມາດຕະຖານເກືອໄອໂອດີນ

**ມາດຕາ 3. ມາດຕະຖານເກືອໄອໂອດີນ**

ເກືອໄອໂອດີນຕ້ອງປະສົມຕາມມາດຕະຖານດັ່ງຕໍ່ໄປນີ້:

1. ເກືອໄອໂອດີນຕ້ອງມີໂປຕາຊຽມ ຫຼື ໂຊດຽມໄອໂອເດດທຽບກັບການບັນຈຸ:
   ກ. ບໍ່ຕໍ່າກວ່າ 35 ມີລີກຼາມ ໂປຕາຊຽມ ຫຼື ໂຊດຽມໄອໂອເດດຕໍ່ເກືອ 1 ກິໂລ.
   ຂ. ບໍ່ສູງກວ່າ 100 ມີລີກຼາມ ໂປຕາຊຽມ ຫຼື ໂຊດຽມໄອໂອເດດຕໍ່ເກືອ 1 ກິໂລ.
2. ເກືອໄອໂອດີນມີຄຸນລັກສະນະເປັນເມັດແຂງ ຫຼື ເປັນຝຸ່ນສີຂາວ, ບໍ່ປົນເປື້ອນກັບຂີ້ເຖົ່າ, ຂີ້ດິນ, ຊາຍ, ຫີນ ຫຼື ປົນເປື້ອນດ້ວຍສິ່ງແປກປົນອື່ນໆ...ແລະ ມີຄຸນລັກສະນະດັ່ງລຸ່ມນີ້:
   2.1. ຄວາມຊຸ່ມບໍ່ສູງກ່ວາ 4 %w/w
   2.2. ຄວາມປົນເປື້ອນທີ່ບໍ່ລະລາຍບໍ່ສູງກ່ວາ 1%w/w
   2.3. ສິ່ງທີ່ລະລາຍໄດ້ (ນອກຈາກ NaCl) ບໍ່ສູງກວ່າ 3%w/w
   2.4. ໂຊດຽມກຼໍໄຣ (NaCl) ບໍ່ຕໍ່າກ່ວາ 96%w/w
   2.5. ມີໄອໂອດີນ:
      - ໃນລະຫວ່າງ 40 ຫາ 60ppm ຢູ່ບ່ອນຜະລິດ ແລະ ດ່ານນໍາເຂົ້າ.
      - ບໍ່ຕໍ່າກ່ວາ 20ppm ຢູ່ບ່ອນຂາຍຍ່ອຍ ແລະ ນໍາໃຊ້ໃນຄອບຄົວ.
   2.6. ການປົນເປື້ອນດ້ວຍສານເຄມີທີ່ເປັນໂລຫະໜັກບໍ່ໃຫ້ກາຍ:
      ອາກເຊນິກ (As) 0,5mg/kg; ທອງ (Cu) 2mg/kg; ກົ່ວ (Pb) 2mg/kg; ກາດມີອອມ (Cd) 0,5mg/kg; ນໍ້າບາ (Hg) 0,1mg/kg.

**ມາດຕາ 4. ການບັນຈຸ ແລະ ຫຸ້ມຫໍ່**

ເກືອໄອໂອດີນຕ້ອງບັນຈຸ ແລະ ຫຸ້ມຫໍ່ດ້ວຍຖົງຢາງ ທີ່ໄດ້ມາດຕະຖານຕາມຂະໜາດທີ່ເໝາະສົມເຊັ່ນ: 500 ກຼາມ, 1 ກິໂລກຼາມ, ຫລີກເວັ້ນການບັນຈຸທີ່ມີບໍລິມາດຂະໜາດໃຫຍ່, ທັງນີ້ເພື່ອຮັກສາເກືອໃຫ້ໄດ້ຄຸນນະພາບ ຕາມມາດຕະຖານທີ່ໄດ້ລະບຸໄວ້ໃນມາດຕາ 3 ຂ້າງເທິງນີ້.

**ມາດຕາ 5. ສະຫຼາກຕິດຖົງຢາງ**

ສະຫລາກຕິດຖົງຢາງທີ່ບັນຈຸເກືອໄອໂອດີນຢ່າງໜ້ອຍ ຕ້ອງມີເນື້ອໃນທີ່ຈໍາເປັນເປັນພາສາລາວ ແລະ ພາສາສາກົນດັ່ງຕໍ່ໄປນີ້:

1. ຊື່: ເກືອໄອໂອດີນ.
2. ຊື່: ຜູ້ຜະລິດ ຫລື ໂຮງງານ ແລະ ເຄື່ອງໝາຍການຄ້າສະເພາະທີ່ທາງການຮັບຮອງ.
3. ເລກທະບຽນທີ່ອອກໃຫ້ໂດຍກົມອາຫານ ແລະ ຢາ.
4. ວັນ, ເດືອນ, ປີຂອງຊຸດຜະລິດ.
5. ນໍ້າໜັກຂອງເກືອຢູ່ໃນຖົງ.
6. ປະລິມານສານໄອໂອດີນທີ່ໄດ້ປະສົມໃສ່ (ppm ຫລື mg/kg).

**ມາດຕາ 6. ການເກັບມ້ຽນ ແລະ ການຂົນສົ່ງ**

ເກືອໄອໂອດີນຕ້ອງເກັບມ້ຽນຮັກສາຢູ່ໃນເງື່ອນໄຂລຸ່ມນີ້:/ - ສະຖານທີ່ແຫ້ງ, ອາກາດປອດໂປ່ງ.

- ບໍ່ໄວ້ໃກ້ເຕົາໄຟ ແລະ ບໍ່ຕາກແດດ;
- ບໍ່ຖືກຊຸມປຽກ; ບໍ່ຖືກນໍ້າຫລືນໍ້າຝົນ;
- ປາສະຈາກການປົນເປື້ອນຈາກຂີ້ຝຸ່ນ ແລະ ສານເຄມີ;

## ໝວດທີ 3

## ການເກືອດຫ້າມ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 7. ການເກືອດຫ້າມ**

ຫ້າມຜະລິດ, ນໍາເຂົ້າ-ສົ່ງອອກ, ຈໍາໜ່າຍ ແລະ ແຈກຢາຍເກືອທີ່ບໍ່ບັນລຸມາດຕະຖານ ຕາມໝວດທີ 2; ມາດຕາ 3, 4, 5 ແລະ 6 ຂອງກົດໝາຍສະບັບນີ້.

**ມາດຕາ 8. ນະໂຍບາຍຕໍ່ຜູ້ທີ່ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດຂໍ້ກໍານົດສະບັບນີ້, ຈະໄດ້ຮັບການຍ້ອງຍໍ ແລະ ປະຕິບັດນະໂຍບາຍຕ່າງໆຊຶ່ງລັດຖະບານເປັນຜູ້ກໍານົດລະອຽດ.

**ມາດຕາ 9. ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ, ຜູ້ຜະລິດ, ຜູ້ນໍາເຂົ້າ ແລະ ຂາຍຍ່ອຍທີ່ໄດ້ລະເມີດຂໍ້ກໍານົດສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ປັບໃໝ ແລະ ລົງໂທດຕາມກໍລະນີໜັກ ຫຼື ເບົາ ດັ່ງລາຍລະອຽດລຸ່ມນີ້:

1. ຜູ້ລະເມີດຄັ້ງທີ 1
   ຜູ້ທີ່ລະເມີດຈະຖືກສຶກສາອົບຮົມ, ກ່າວເຕືອນ ແລະ ບັນທຶກໄວ້ໃນປຶ້ມຕິດຕາມ.
2. ຜູ້ລະເມີດຄັ້ງທີ 2
   ຜູ້ທີ່ລະເມີດຈະຖືກຍຶດສິນຄ້າ ແລະ ປັບໃໝ 10% ຂອງມູນຄ່າສິນຄ້າຕາມທ້ອງຕະຫລາດ ແລະ ບັນທຶກໄວ້ໃນປຶ້ມຕິດຕາມ.
3. ຜູ້ລະເມີດຄັ້ງທີ 3
   ຜູ້ທີ່ລະເມີດຈະຖືກຍຶດສິນຄ້າ ແລະ ປັບໃໝສອງເທົ່າຂອງມູນຄ່າສິນຄ້າຕາມທ້ອງຕະຫຼາດ, ບັນທຶກໄວ້ໃນປຶ້ມຕິດຕາມ ຫລື/ແລະ ນໍາສະເໜີຕໍ່ຂະແໜງການກ່ຽວຂ້ອງໂຈະ ຫຼື ປິດໂຮງງານ/ບໍລິສັດ/ຮ້ານຄ້າ ຕາມກໍລະນີໜັກ ຫລື ເບົາ.

## ໝວດທີ 4

## ບົດບັນຍັດສຸດທ້າຍ

**ມາດຕາ 10. ການຈັດຕັ້ງປະຕິບັດ**

ມອບໃຫ້ກົມອາຫານ ແລະ ຢາ, ກົມອະນາໄມກັນພະຍາດ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດໃຫ້ປະກົດຜົນເປັນຈິງ.

**ມາດຕາ 11. ຜົນສັກສິດ**

ຂໍ້ກໍານົດວ່າດ້ວຍມາດຖານເກືອໄອໂອດີນສະບັບນີ້ ມີຜົນບັງຄັບໃຊ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ. ຂໍ້ກໍານົດສະບັບນີ້ປ່ຽນແທນມາດຕະຖານເກືອໄອໂອດີນ ສະບັບເລກທີ 1029/ກຊສ, ລົງວັນທີ

ລັດຖະມົນຕີວ່າການກະຊວງສາທາລະນະສຸກ

ຮສ. ປອນເມກ ດາລາລອຍ